ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----000-----

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)
ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

ນະຄອນຫລວງວຽງຈັນ, ວັນທີ 09 ມິຖຸນາ 2015

## ບົດບັນທຶກກອງປະຊຸມສະພາບໍລິຫານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ສະໄໝສາມັນຄັ້ງທີ 21 ທີ່ ເມືອງເຊໂປນ ແຂວງສະຫວັນນະເຂດ, (27-28 ພຶດສະພາ 2015)

ກອງປະຊຸມສະພາບໍລິຫານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ສະໄໝສາມັນ ຄັ້ງທີ 21 ໄດ້ຈັດຂຶ້ນຢູ່ ເມືອງເຊໂປນ ແຂວງສະຫວັນນະເຂດ ໂດຍມີຈຸດປະສົງເພື່ອທົບທວນຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ວຽກງານ ທລຍ ແຕ່ກອງປະຊຸມຄັ້ງຜ່ານມາ ແລະ ເພື່ອຂໍທິດຊີ້ນໍາຈາກຄະນະສະພາບໍລິຫານ ສໍາລັບການຈັດຕັ້ງປະຕິບັດວຽກງານໃນໄລຍະຕໍ່ໄປ. ກອງປະຊຸມໄດ້ດໍາເນີນເປັນເວລາ 2 ມື້ ທີ່ເຕັມໄປດ້ວຍບັນຍາກາດອັນຟົດຟື້ນ, ດ້ວຍຄວາມຮັບຜິດຊອບສູງ, ມີການສົນທະນາ ແລກປ່ຽນຄວາມຄິດເຫັນໃນການຢ້ຽມຢາມກິດຈະກໍາຕົວຈິງຂອງ ທລຍ ຢູ່ພາກສະໜາມ ເພື່ອມາສົມທົບໃສ່ບົດລາຍງານປະຈໍາປີຂອງວຽກງານ ທລຍ ຕໍ່ສະພາບໍລິຫານ. ການດໍາເນີນກອງປະຊຸມໃນຄັ້ງນີ້ປະກອບດ້ວຍ 2 ພາກຄື:

*ພາກທີ (1.) ການຢ້ຽມຢາມພາກສະໜາມ (27 ພຶດສະພາ 2015)*, ປະກອບມີ 4 ຈຸດໃຫຍ່ ທີ່ມີກິດຈະກໍາອັນພົ້ນເດັ່ນຂອງວຽກງານ ທລຍ ທີ່ຖືວ່າເປັນຕົວແບບໃນການແກ້ໄຂຄວາມທຸກຍາກຂອງບ້ານ ເຊິ່ງສາມາດຂະຫຍາຍອອກທາງກວ້າງສູ່ບ້ານອື່ນໆ ໄດ້ພ້ອມທັງໄດ້ແວ່ຊົມທິວທັດອັນສວຍງາມ ບອກກັບຮ່ອງຮອຍປະຫວັດສາດໃນຊ່ວງສົງຄາມ. ຈຸດທີ 1: ການໄປຢ້ຽມຈຸດສຸມແດນວິໄລເມືອງນອງ ເພື່ອຢ້ຽມຢາມ ແລະ ຮັບຟັງການລາຍງານສະພາບການພັດທະນາ ເສດຖະກິດສັງຄົມຂອງຈຸດສຸມດັ່ງກ່າວ ເຊິ່ງໃນນັ້ນກໍປະກອບມີກິດຈະກໍາຂອງ ທລຍ ທີ່ປະກອບສ່ວນເປັນຕົ້ນແມ່ນໂຄງການສ້ອມແປງ ແລະ ວາງທໍ່ທາງ, ກໍ່ສ້າງໂຮງຮຽນປະຖົມ, ຝຶກອົບຮົມເຕັກນິກການກ້າເບ້ຍ ແລະ ປູກຢາງບົງ ລວມທັງການຢ້ຽມຢາມກິດຈະ ກໍາຂອງໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ; ຈຸດທີ 2: ຢ້ຽມຢາມກິດຈະກໍາ ທລຍ ຢູ່ບ້ານແກ້ງລີ້ນ ທີ່ໄດ້ຮັບການຊ່ວຍເຫລືອຈາກ ທລຍ 1 ແລະ ທລຍ 2 ເປັນຕົ້ນ ໂຄງການກໍ່ສ້າງສະໂມສອນກຸ່ມບ້ານ, ສ້ອມແປງເສັ້ນທາງ, ກໍ່ສ້າງຂົວ ແລະ ວັງສະຫງວນ ລວມທັງ ກິດຈະກໍາປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານ ໂພຊະນາການ; ຈຸດທີ 3 ແລະ ຈຸດທີ 4: ມີການທ່ຽວຊົມຮ່ອງຮອຍປະຫວັດສາດໃນໄລຍະ ຕໍ່ສູ້ກູ້ຊາດ ໂດຍສະເພາະບັ້ນຮົບລໍາເຊີນ 719 ແລະ ເສັ້ນທາງໂຮຈິມິນ ຢູ່ບ້ານດົງ ເມືອງເຊໂປນ.

*ພາກທີ (2.) ການລາຍງານ ແລະ ນໍາສະເໜີ* ກອງປະຊຸມຄັ້ງນີ້ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 28 ພຶດສະພາ 2015 ພາຍໃຕ້ການເປັນປະທານຂອງ ທ່ານ ບຸນເຮືອງ ດວງພະຈັນ ລັດຖະມົນຕີປະຈໍາຫ້ອງວ່າການ

ລັດຖະບານ, ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ທັງເປັນປະທານສະພາບໍລິຫານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ, ທ່ານ ຄໍາເພີຍ ຜົນທະຈອນ ຮອງເລຂາພັກແຂວງ, ຮອງເຈົ້າແຂວງສະຫວັນນະເຂດ ແລະ ທ່ານ ນາງ ທິບພະກອນ ຈັນທະວົງສາ ລັດຖະມົນຕີຊ່ວຍວ່າການກະຊວງການເງິນ, ພ້ອມດ້ວຍກໍາມະການສະພາບໍລິຫານ, ຕາງໜ້າກະຊວງ ແລະ ອົງການຈັດຕັ້ງມະຫາຊົນ, ການນໍາຂັ້ນເມືອງ (ເມືອງເປົ້າໝາຍ ທລຍ), ບັນດາຫົວໜ້າພະແນກ ອ້ອມຂ້າງ ແຂວງ ສະຫວັນນະເຂດ, ຄະນະຮັບຜິດຊອບ ທລຍ ສູນກາງ, ຜູ້ປະສານງານ ທລຍ 10 ແຂວງ ໄດ້ເຂົ້າຮ່ວມຢ່າງພ້ອມພຽງກັນ. ພ້ອມກັນນັ້ນ ກອງປະຊຸມສະພາບໍລິຫານ ຍັງໄດ້ຮັບກຽດຕ້ອນຮັບການເຂົ້າຮ່ວມຂອງ ທ່ານ ຊາໂຕຊິ ອິຊິຫາລາ ຕາງໜ້າໃຫ້ທະນາຄານໂລກ ແລະ ທ່ານເດວິດ ໂວເຊີນ ອຸປະທູດອິດສະຕາລີ, ເຊິ່ງມີຜູ້ແທນທັງໝົດ 82 ຄົນ, ຍິງ 16 ຄົນ.

ພາຍຫລັງການໃຫ້ກຽດກ່າວຕ້ອນຮັບ ຂອງທ່ານ ຄໍາເພີຍ ຜົນທະຈອນ ຮອງເຈົ້າແຂວງສະຫວັນນະເຂດ ແລ້ວ, ທ່ານ ບຸນເຮືອງ ດວງພະຈັນ ລັດຖະມົນຕີ ປະຈໍາຫ້ອງວ່າການລັດຖະບານ, ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມ ທຸກຍາກ ຂັ້ນສູນກາງ ທັງເປັນປະທານສະພາບໍລິຫານ ທລຍ ໄດ້ໃຫ້ກຽດຂຶ້ນກ່າວເປີດກອງປະຊຸມສະພາບໍລິຫານໃນຄັ້ງນີ້ ຢ່າງເປັນທາງການ ພ້ອມທັງຊີ້ນໍາກອງປະຊຸມຕາມວາລະຂອງກອງປະຊຸມທີ່ໄດ້ຖືກຮັບຮອງຢ່າງເປັນທາງການ. ຈາກນັ້ນກໍໄດ້ອະນຸຍາດໃຫ້ ທ່ານ ບຸນກວ້າງ ສຸວັນນະພັນ ຜູ້ອໍານວຍການບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ ຂຶ້ນລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງສະພາບໍລິຫານຄັ້ງທີ 20 ທີ່ແຂວງອັດຕະປື ແລະ ບັນດາວຽກງານທີ່ພົ້ນເດັ່ນຂອງ ທລຍ ຕະຫລອດໄລຍະ 1 ປີຜ່ານມາຮອດປະຈຸບັນ. ເພື່ອຍົກໃຫ້ເຫັນຜົນໄດ້ຮັບຕົວຈິງຂອງການຈັດຕັ້ງປະຕິບັດ ວຽກງານ ທລຍ ທີ່ສາມາດປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ພາຍຫຼັງທີ່ໄດ້ຮັບຟັງການລາຍງານຂອງຜູ້ອໍານວຍການບໍລິຫານ ທລຍ ແລ້ວ, ໄດ້ມີການຮັບຟັງການນໍາສະເໜີຈາກຕາງໜ້າກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຈາກບ້ານແກ້ງກີ, ເມືອງເຊໂປນ, ແຂວງ ສະຫວັນນະເຂດ ກ່ຽວກັບກິດຈະກໍາຕໍ່າແຜ່ນ ແລະ ຈາກບ້ານສາກົກ, ເມືອງຮ້ຽມ, ແຂວງ ຫົວພັນ ກ່ຽວກັບກິດຈະກໍາລ້ຽງໄກ່, ລ້ຽງປາ, ລ້ຽງໝູ, ຕໍາ່ແຜ່ນ ໂດຍຕິດພັນກັບວຽກງານໂພຊະນາການ. ຜູ້ຕາງໜ້າໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບການປ່ຽນແປງ ທີ່ເກີດຂຶ້ນຫຼັງຈາກທີ່ໄດ້ຮັບໂຄງການ. ເວົ້າລວມແລ້ວ ໂຄງການໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນໃນການພັດທະນາສີມືແຮງງານ, ສະຕິເປັນເຈົ້າຕົນເອງ ແລະ ຄວາມກະຕືລືລົ້ນໃນການສ້າງລາຍຮັບ ເຮັດໃຫ້ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນດີຂຶ້ນ ເປັນຕົ້ນແມ່ນມີລາຍຮັບມາສູ່ຄອບຄົວເພີ່ມຂຶ້ນ ແລະ ຍັງມີອາຫານກິນຢ່າງພຽງພໍ ເຊິ່ງສາມາດຄໍ້າປະກັນສະບຽງອາຫານໄດ້ຂັ້ນພື້ນຖານ. ພ້ອມດຽວກັນນີ້ ກໍຖືວ່າເປັນບົດຮຽນທີ່ສໍາຄັນເຊິ່ງສາມາດຜັນຂະຫຍາຍອອກສູ່ທາງກວ້າງໃນຂົງເຂດຊົນນະບົດພູດອຍຫ່າງໄກສອກຫຼີກໃນ ສປປ ລາວ ອີກດ້ວຍ.

ກອງປະຊຸມສະພາບໍລິຫານໃນຄັ້ງນີ້ຍັງໄດ້ພິຈາລະນາ ທິດທາງແຜນການ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດ ທລຍ ໄລຍະສືບຕໍ່ນຶ່ງປີ ແລະ ການຄົ້ນຄວ້າພິຈາລະນາສໍາລັບ ທລຍ 3 ເຊິ່ງສາມາດສະຫລຸບໄດ້ດັ່ງລຸ່ມນີ້:

1. ກອງປະຊຸມສະເໜີໃຫ້ສືບຕໍ່ຈັດຕັ້ງປະຕິບັດວຽກງານ ທລຍ 2 ໃຫ້ໄດ້ຮັບຜົນດີທີ່ສຸດ ໂດຍໃຫ້ນອນໃນແຜນຍຸດທະສາດຂອງການພັດທະນາ ແລະ ເປັນພື້ນຖານສໍາຄັນໃຫ້ແກ່ການກະກຽມ ແລະ ຈັດຕັ້ງປະຕິບັດ ທລຍ 3.
2. ໃຫ້ປຶກສາຫາລືກັບຜູ້ໃຫ້ທຶນກ່ຽວກັບການກະກຽມ ແລະ ວາງແຜນວຽກງານ ທລຍ 3 ເປັນຕົ້ນແມ່ນກິດຈະກໍາ ແລະ ຂອບເຂດຂອງການຈັດຕັ້ງປະຕິບັດ. ສະນັ້ນກອງປະຊຸມເຫັນດີ ໃຫ້ມີການແຕ່ງຕັ້ງຄະນະວິຊາການຝ່າຍ

ລາວ ແລະ ຝ່າຍຜູ້ໃຫ້ທຶນ ເພື່ອສຶກສາ, ຄົ້ນຄວ້າ ແລະ ອອກແບບ ທລຍ 3 ໂດຍຄະນະສະພາບໍລິຫານ ຈະກະກຽມລາຍງານຕໍ່ລັດຖະບານ ເພື່ອສົ່ງໜັງສືເຖິງຜູ້ໃຫ້ທຶນ ກ່ຽວກັບການກະກຽມ ທລຍ 3 ໃນໄວໆນີ້.

3. ໃຫ້ຫ້ອງການຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຂວງ, ຜູ້ປະສານງານ ທລຍ ແຂວງ ແລະ ຄະນະຮັບຜິດຊອບ ທລຍ ສູນກາງ ປະສານສົມທົບກັນຕື່ມ ເພື່ອແນໃສ່ປັບປຸງແບບແຜນວິທີເຮັດວຽກ ແລະ ວຽກບຸກຄະລາກອນໃຫ້ໄປໃນທິດທາງລ່ອງລຽນກັນກວ່າເກົ່າ.
4. ສະເໜີໃຫ້ ຄພທສ ແລະ ທລຍ ຄົ້ນຄວ້າກ່ຽວກັບການປັບປຸງ ດຳລັດເລກທີ 10/ນຍ ວ່າດ້ວຍການກໍ່ຕັ້ງ ທລຍ ເພື່ອໃຫ້ມີຄວາມຄ່ອງຕົວໃນການຈັດຕັ້ງປະຕິບັດ ທລຍ 3 ພ້ອມທັງໃຫ້ສອດຄ່ອງກັບແຜນພັດທະນາ 5 ປີ ຂອງລັດຖະບານ ແລະ ຈຸດປະສົງຂອງ ຜູ້ໃຫ້ທຶນ. ພ້ອມດຽວກັນນັ້ນ ກໍ່ສະເໜີໃຫ້ມີການປ່ຽນເວລາການວາງແຜນຂອງ ທລຍ ໃຫ້ເລີ່ມໃນລະດູຝົນ ແລະ ຈັດຕັ້ງປະຕິບັດ ຫຼື ກໍ່ສ້າງໃນລະດູແລ້ງ.
5. ສ້າງ ທລຍ 3 ໃຫ້ເປັນໂຄງການຕົວແບບຂອງການພັດທະນາທີ່ຈັດຕັ້ງປະຕິບັດໂດຍຊຸມຊົນ ເພື່ອຍາດແຍ່ງເອົາທຶນ ຈາກພາກພື້ນ ແລະ ສາກົນ.
6. ໃຫ້ ທລຍ ປະສານສົມທົບກັບອົງການກ່ຽວຂ້ອງ ກ່ຽວກັບການຈັດຕັ້ງກິດຈະກຳເສີມສ້າງລາຍຮັບ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.
7. ກອງປະຊຸມຮັບຊາບການອະນຸມັດທຶນຈາກຜູ້ໃຫ້ທຶນເພີ່ມຈຳນວນ 18 ລ້ານໂດລາສະຫະລັດ ເພື່ອການຈັດຕັ້ງປະຕິບັດກິດຈະກຳໃນ 10 ແຂວງຂອງ ທລຍ ສຳລັບໄລຍະສືບຕໍ່ຈົນຮອດທ້າຍປີ 2016 (ໃນນັ້ນ ເປັນທຶນກູ້ຢືມຂອງ IDA ຈຳນວນ 11.6 ລ້ານໂດລາສະຫະລັດ, DFAT ເປັນທຶນຊ່ວຍເຫຼືອລ້າ ຈຳນວນ 2.4 ລ້ານໂດລາສະຫະລັດ ແລະ SDC ເປັນທຶນຊ່ວຍເຫຼືອລ້າ ຈຳນວນ 4 ລ້ານໂດລາສະຫະລັດ) ເຊິ່ງກວມເອົາ 4 ກິດຈະກຳໃຫຍ່ ປະກອບມີ (1) ການປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງຊົນນະບົດ; (2) ການສ້າງຂີດຄວາມສາມາດ ແລະ ຄວາມຮູ້ໃຫ້ແກ່ທ້ອງຖິ່ນ ແລະ ຊົນນະບົດ; (3) ສ້າງຕົວແບບການປັບປຸງຊີວິດການເປັນຢູ່ຕິດພັນກັບໂພສະນາການ; ແລະ (4) ການບໍລິຫານຈັດການໂຄງການ. ຄາດວ່າຈະມີ 250 ໂຄງການເປັນຢ່າງໜ້ອຍທີ່ກ່ຽວຂ້ອງກັບພື້ນຖານໂຄງລ່າງ. ພ້ອມດຽວກັນນັ້ນ ກໍຈະໄດ້ເອົາໃຈໃສ່ວຽກງານສ້າງຄວາມເຂັ້ມແຂງ ແລະ ສະຕິເປັນເຈົ້າລົງສູ່ທາງເລິກ ເຊິ່ງຖືວ່າເປັນວຽກງານສຳຄັນ ສຳລັບການພັດທະນາເສດຖະກິດສັງຄົມໃຫ້ຍືນຍົງ.
8. ກ່ຽວກັບທຶນສົມທົບຂອງລັດຖະບານ ຈຳນວນ 32 ຕື້ກີບນັ້ນ ທີ່ຈະຖືກນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ 110 ໂຄງການໃນຮອບວຽນ 13 ສົກປີ 2015-2016, ກະຊວງແຜນການ ແລະ ການລົງທຶນ ໄດ້ເຫັນດີໃຫ້ ທລຍ ສາມາດເລີ່ມຈັດຕັ້ງປະຕິບັດກິດຈະກຳໄດ້ເລີຍ ແຕ່ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີນຶ່ງແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2015 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ.
9. ອີງໃສ່ຜົນສຳເລັດຂອງ ທລຍ, ລັດຖະບານລາວໄດ້ເຫັນດີຕົກລົງ ສະເໜີໃຫ້ກອງທຶນຫລຸດຜ່ອນຄວາມທຸກຍາກເຂົ້າຮັບລາງວັນລະດັບອາຊຽນ ດ້ານການພັດທະນາຊົນນະບົດໃນເດືອນຕຸລາ 2015 ທີ່ຈະມາເຖິງນີ້.
10. ອີງໃສ່ບົດຮຽນຕົວຈິງ ກ່ຽວກັບຄວາມຫຍຸ້ງຍາກໃນການຕິດຕໍ່ປະສານງານ ຍ້ອນໄລຍະທາງ, ສະນັ້ນຜູ້ຕາງໜ້າແຂວງ ຜົ້ງສາລີ ຈິ່ງສະເໜີຂໍຍົກຍ້າຍຫ້ອງການ ທລຍ ແຂວງ ຜົ້ງສາລີ ໄປຢູ່ເທດສະບານແຂວງ ໃກ້ກັບຫ້ອງການຄະນະພັດທະນາຊົນນະບົດ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານ.
11. ການຈັດສັນງົບປະມານກຸ່ມບ້ານບໍ່ຄວນອີງໃສ່ແຕ່ຈຳນວນປະຊາກອນຂອງກຸ່ມບ້ານເທົ່ານັ້ນ ແຕ່ສະເໜີໃຫ້ພິຈາລະນາກ່ຽວກັບໄລຍະທາງ ແລະ ທີ່ຕັ້ງຂອງກຸ່ມບ້ານ ເພື່ອໃຫ້ກຸ່ມບ້ານທີ່ຢູ່ຫ່າງໄກສອກຫຼີກທີ່ມີຈຳນວນ

ປະຊາກອນໜ້ອຍໄດ້ຮັບງົບປະມານທີ່ເໝາະສົມ ໃນການກໍ່ສ້າງໂຄງການຍ່ອຍ ເຊິ່ງເປັນບົດຮຽນໃຫ້ແກ່ການ ກະກຽມ ທລຍ 3 ໃຫ້ມີຄວາມສອດຄ່ອງກັບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ.

12. ກອງປະຊຸມຍັງໄດ້ເຫັນດີ ຮັບຮອງເອົາການຈັດກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ 22 ຕໍ່ໜ້າ ຢູ່ ແຂວງອຸດົມໄຊ. ສ່ວນວັນ ແລະ ເວລາ ຈັດກອງປະຊຸມໄດ້ມອບໃຫ້ ທລຍ ເປັນຜູ້ຄົ້ນຄ້ວາ ແລະ ນໍາສະເໜີຕໍ່ ປະທານສະພາບໍລິຫານ.

ກອງປະຊຸມສະພາບໍລິຫານຄັ້ງທີ 21 ທີ່ແຂວງສະຫວັນນະເຂດ ໄດ້ປິດລົງຢ່າງເປັນທາງການໃນເວລາ 16:30 ໂມງຂອງມື້ດຽວກັນ ວັນທີ 28 ພຶດສະພາ 2015.

<u>ຜູ້ບັນທຶກກອງປະຊຸມ</u>

ຜູ້ອໍານວຍການບໍລິຫານກອງທຶນຫລຸດຜ່ອນຄວາມທຸກຍາກ

ບຸນກວ້າງ ສຸວັນນະພັນ

Bounkhouang SOUVANNAPHANH

<u>ຮັບຮູ້ ແລະ ເຫັນດີຈາກ</u>

ລັດຖະມົນຕີປະຈໍາຫ້ອງວ່າການລັດຖະບານ, ຫົວໜ້າ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກ ຍາກ ຂັ້ນສູນກາງ ທັງເປັນປະທານສະພາບໍລິຫານຂອງ ກອງທຶນຫລຸດຜ່ອນຄວາມທຸກຍາກ

ບຸນເຮືອງ ດວງພະຈັນ